Notice of Privacy Practices
(ແຈ້ງການກ່ຽວກັບແນວທາງປະຕິບັດສຳລັບຄວາມເປັນສ່ວນຕົວ)
for Client Medical Information
(ສຳລັບຂໍ້ມູນທາງການແພດຂອງລູກຄ້າ)

ມີຜົນບັງຄັບໃຊ້ໃນວັນທີ 1 ພະຈິກ 2025

DSHS ຕ້ອງແຈ້ງໃຫ້ທ່ານຊາບກ່ຽວກັບສິດຄວາມເປັນສ່ວນຕົວຂອງທ່ານຕາມ Health Insurance Portability and Accountability Act (ກົດໝາຍວ່າດ້ວຍຄວາມສາມາດ
ພົກພາໄດ້ ແລະ ຄວາມຮັບຜິດຊອບໃນການປະກັນໄພສຸຂະພາບ, HIPAA). (45 CFR §164.520). DSHS ແມ່ນ "ໜ່ວຍງານປະສົມ" ບໍ່ແມ່ນໝົດທຸກສ່ວນຂອງ DSHS ຈະໄດ້ຮັບການຄຸ້ມຄອງຈາກ HIPAA, ມີພຽງແຕ່ບັນດາໂຄງການທີ່ໄດ້ຮັບການລະບຸວ່າເປັນ ອົງປະກອບການເບິ່ງແຍງດູແລສຸຂະພາບຢູ່ໃນເວັບໄຊ DSHS ເທົ່ານັ້ນ ຈຶ່ງໄດ້ຮັບການ
ຄຸ້ມຄອງຈາກ HIPAA. ແຈ້ງການສະບັບນີ້ນຳໃຊ້ສະເພາະກັບບັນດາລູກຄ້າທີ່ໄດ້ຮັບການບໍລິການຈາກບັນດາໂຄງການທີ່ໄດ້ຮັບການຄຸ້ມຄອງເຫຼົ່ານັ້ນເທົ່ານັ້ນ. ແຈ້ງການສະບັບນີ້ບໍ່
ມີຜົນກະທົບຕໍ່ການມີສິດໄດ້ຮັບການບໍລິການຂອງ DSHS ຂອງທ່ານ.

ແຈ້ງການສະບັບນີ້ອະທິບາຍເຖິງວິທີການໃນການນຳໃຊ້ ແລະ ເປີດເຜີຍຂໍ້ມູນທາງການແພດກ່ຽວກັບທ່ານ ແລະ ວິທີທີ່ທ່ານຈະໄດ້ຮັບຂໍ້ມູນນີ້. ກະລຸນາອ່ານເບິ່ງຢ່າງລະອຽດ.

PHI ແມ່ນຫຍັງ?

Protected Health Information (ຂໍ້ມູນສຸຂະພາບທີ່ໄດ້ຮັບການປົກປ້ອງ, PHI) ແມ່ນຂໍ້ມູນທາງການແພດຂອງລູກຄ້າ ທີ່ DSHS ຖືຄອງສ່ວນໜຶ່ງ ທີ່ໄດ້ຮັບການຄຸ້ມຄອງຈາກ HIPAA. PHI
ແມ່ນຂໍ້ມູນທາງການແພດທີ່ມີຄວາມເຊື່ອມໂຍງກັບ
ທ່ານກ່ຽວກັບສະຖານະ ຫຼື ສະພາວະສຸຂະພາບຂອງທ່ານ, ການເບິ່ງແຍງດູແລສຸຂະພາບທີ່ທ່ານໄດ້ຮັບ ຫຼື ການຈ່າຍເງິນສຳລັບ
ການເບິ່ງແຍງດູແລສຸຂະພາບຂອງທ່ານ. DSHS ຈຳຕ້ອງປົກປ້ອງ PHI ຂອງທ່ານຕາມກົດໝາຍ.

ຂໍ້ມູນ PHI ທີ່ DSHS ມີກ່ຽວກັບຂ້າພະເຈົ້າ ແມ່ນຫຍັງແດ?

ເພື່ອຊ່ວຍພວກເຮົາໃນການໃຫ້ບໍລິການທ່ານ, ທ່ານອາດຈຳເປັນຕ້ອງໃຫ້ຂໍ້ມູນທາງການແພດ ຫຼື ສຸຂະພາບແກ່ພວກເຮົາ ລວມທັງສະຖານທີ່, ຂໍ້ມູນທາງດ້ານການເງິນ ຫຼື ບັນທຶກທາງການແພດຂອງທ່ານ. ນອກຈາກນັ້ນ,
ພວກເຮົາກໍຍັງອາດຈະຂໍຂໍ້ມູນ PHI ກ່ຽວກັບທ່ານຈາກແຫຼ່ງອື່ນໆ ທີ່ຈຳເປັນ ເພື່ອໃຫ້ບໍລິການທ່ານ ຫຼື ຈ່າຍຄ່າເບິ່ງແຍງດູແລຂອງທ່ານອີກດ້ວຍ.

ຜູ້ທີ່ຈະເຫັນ PHI ຂອງຂ້າພະເຈົ້າແມ່ນມີໃຜແດ?

ພວກເຮົາໃຊ້ PHI ພຽງແຕ່ຈຳນວນໜ້ອຍທີ່ສຸດ ທີ່ພວກເຮົາຕ້ອງການ ເພື່ອເຮັດວຽກຂອງພວກເຮົາເທົ່ານັ້ນ. ພວກເຮົາອາດຈະ
ແບ່ງປັນ PHI ໃຫ້ແກ່ບັນດາໂຄງການ ຫຼື ບຸກຄົນອື່ນໆ ຖ້າຫາກວ່າໄດ້ຮັບອະນຸຍາດຕາມກົດໝາຍ ຫຼື ຖ້າຫາກວ່າທ່ານໃຫ້ອະນຸຍາດ. ຕົວຢ່າງ: ຂໍ້ມູນ PHI ຂອງທ່ານອາດຈະຖືກມອບໃຫ້ ແລະ ນຳໃຊ້ໂດຍ Health Care Authority (ອົງການເບິ່ງແຍງດູແລ
ສຸຂະພາບ) ແລະ ບັນດາຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບອື່ນໆ ເພື່ອປະສານງານ ແລະ ຈ່າຍຄ່າການເບິ່ງແຍງດູແລສຸຂະພາບ
ຂອງທ່ານ. ພວກເຮົາອາດຈະແບ່ງປັນຂໍ້ມູນ PHI ໃນອະດີດ, ປັດຈຸບັນ ຫຼື ອະນາຄົດ.

ຂໍ້ມູນ PHI ທີ່ DSHS ຈະແບ່ງປັນແມ່ນມີຫຍັງແດ?

ພວກເຮົາພຽງແຕ່ແບ່ງປັນຂໍ້ມູນ PHI ຂອງທ່ານທີ່ບຸກຄົນອື່ນຕ້ອງການ ເພື່ອເຮັດວຽກຂອງພວກເຂົາ ແລະ ຕາມທີ່ກົດໝາຍໃຫ້
ອະນຸຍາດເທົ່ານັ້ນ. ທ່ານສາມາດຈະຂໍລາຍຊື່ບຸກຄົນທີ່ DSHS ໄດ້ແບ່ງປັນຂໍ້ມູນ PHI ຂອງທ່ານໃຫ້ ເພື່ອຈຸດປະສົງບາງຢ່າງໃນ
ໄລຍະຫົກປີທີ່ຜ່ານມາໄດ້.

DSHS ອະແບ່ງປັນຂໍ້ມູນ PHI ເມື່ອໃດ?

ພວກເຮົາແບ່ງປັນ PHI ບົນພື້ນຖານ “ຄວາມຈຳເປັນທີ່ຈະຕ້ອງຮູ້” ເພື່ອປະສານງານການບໍລິການ ແລະ ສຳລັບການປິ່ນປົວ, ການຈ່າຍເງິນ ແລະ ການດຳເນີນງານໃນການເບິ່ງແຍງດູແລສຸຂະພາບ. ຕົວຢ່າງ: ພວກເຮົາອາດຈະແບ່ງປັນຂໍ້ມູນ:

- ໃຫ້ກັບຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບ ເພື່ອໃຫ້ການປິ່ນປົວທາງການແພດ ແລະ ການຈັດການກໍລະນີ.
- ໃຫ້ແກ່ພາກສ່ວນທີ່ຮັບຜິດຊອບຈ່າຍຄ່າບໍລິການເບິ່ງແຍງດູແລສຸຂະພາບ ເພື່ອຈັດແຈງການຈ່າຍເງິນ.
- ເພື່ອຕັດສິນໃຈວ່າທ່ານມີສິດໄດ້ຮັບໂຄງການຕ່າງໆຂອງ DSHS ຫຼື ບໍ່.
- ເພື່ອສະໜັບສະໜູນການດຳເນີນທຸລະກິດຂອງພວກເຮົາ ເຊັ່ນ: ການຕັດສິນໃຈວ່າການເບິ່ງແຍງດູແລທີ່ທ່ານໄດ້ຮັບຈາກ ຜູ້ໃຫ້ບໍລິການບັນລຸໄດ້ຕາມມາດຕະຖານທາງດ້ານກົດໝາຍ ຫຼື ບໍ່. ກິດຈະກຳເຫຼົ່ານີ້ອາດປະກອບດ້ວຍ ການລວບລວມຂໍ້ມູນ, ກິດຈະກຳການຄຸ້ມຄອງຄວາມສ່ຽງ ແລະ ການກວດສອບ.

ເມື່ອໃດທີ່ DSHS ຈະສາມາດແບ່ງປັນຂໍ້ມູນ PHI ຂອງຂ້າພະເຈົ້າໄດ້ໂດຍບໍ່ມີການອະນຸຍາດຂອງຂ້າພະເຈົ້າ?

ນອກເໜືອຈາກການເປີດເຜີຍສຳລັບການປິ່ນປົວ, ການຈ່າຍເງິນ ແລະ ການດຳເນີນງານໃນການເບິ່ງແຍງດູແລສຸຂະພາບແລ້ວ, DSHS ສາມາດຈະແບ່ງປັນຂໍ້ມູນ PHI ໄດ້ໂດຍບໍ່ມີການອະນຸຍາດຈາກທ່ານ ສຳລັບເຫດຜົນອື່ນໆບາງຢ່າງໄດ້. ຕາມກົດໝາຍແລ້ວ, ພວກເຮົາອາດຈຳຕ້ອງ ຫຼື ຂໍອະນຸຍາດເພື່ອແບ່ງປັນຂໍ້ມູນ PHI ຂອງທ່ານ. ຕົວຢ່າງບາງປະການລວມເຖິງຄວາມຕ້ອງການທີ່ຈະ:

- ແບ່ງປັນຂໍ້ມູນສຸຂະພາບກ່ຽວກັບທ່ານໃຫ້ແກ່ໝູ່ເພື່ອນ ຫຼື ສະມາຊິກໃນຄອບຄົວທີ່ມີສ່ວນຮ່ວມໃນການເບິ່ງແຍງດູແລ ຂອງທ່ານ. ທ່ານມີສິດທີ່ຈະຄັດຄ້ານການແບ່ງປັນນີ້. ຖ້າທ່ານຄັດຄ້ານ, ພວກເຮົາຈະບໍ່ເປີດເຜີຍໃຫ້ແກ່ສະມາຊິກຄອບຄົວ ຫຼື ໝູ່ເພື່ອນຄົນນັ້ນ.
- ແບ່ງປັນກັບເຈົ້າໜ້າທີ່ສາທາລະນະສຸກ ເພື່ອກິດຈະກຳດ້ານສາທາລະນະສຸກ ເຊັ່ນ: ການປ້ອງກັນ ຫຼື ການຄວບຄຸມພະຍາດ ຫຼື ການບາດເຈັບ ຫຼື ການລາຍງານການເກີດ ແລະ ການເສຍຊີວິດ.
- ລາຍງານເຫດການການທາລຸນເດັກ ຫຼື ຜູ້ໃຫຍ່ ຫຼື ການລະເລີຍ ຫຼື ການໃຊ້ຄວາມຮຸນແຮງໃນຄອບຄົວຕໍ່ Child Protective Services (ອົງການບໍລິການປົກປ້ອງເດັກ), Adult Protective Services (ອົງການບໍລິການປົກປ້ອງຜູ້ໃຫຍ່), ເຈົ້າໜ້າທີ່ຕຳຫຼວດ ຫຼື ໜ່ວຍງານອື່ນໆ.
- ໃຫ້ເອກະສານບັນທຶກຕາມຄຳສັ່ງຂອງສານ, ໝາຍຮຽກ, ຄຳຮ້ອງຂໍກວດຄົ້ນ ຫຼື ຂະບວນການທາງກົດໝາຍອື່ນໆ ຫຼື ສຳລັບ ການດຳເນີນຄະດີທາງຕຸລາການ ແລະ ທາງບໍລິຫານ.
- ແບ່ງປັນຂໍ້ມູນ PHI ກັບອົງການຄວບຄຸມດູແລທີ່ອອກໃບອະນຸຍາດໃຫ້ຜູ້ຊ່ຽວຊານດ້ານສຸຂະພາບ ແລະ ອອກໃບອະນຸຍາດ ແລະ ກວດກາສະຖານການແພດ ເຊັ່ນ: ບັນດາບ້ານພັກຄົນຊະລາ ແລະ ໂຮງໝໍຕ່າງໆ.
- ແບ່ງປັນຂໍ້ມູນ PHI ກັບບັນດາໜ່ວຍງານຂອງລັດຖະບານກາງ ແລະ ລັດ ເພື່ອເບິ່ງແຍງດູແລທ່ານ, ຖ້າຈຳເປັນ ເພື່ອກຳນົດວ່າ ທ່ານມີສິດໄດ້ຮັບການບໍລິການ ຫຼືສິດທິປະໂຫຍດ ຫຼື ຕາມທີ່ກົດໝາຍໃຫ້ອະນຸຍາດ.
- ໃຫ້ຂໍ້ມູນ PHI ແກ່ຜູ້ປົກຄອງ ຫຼື ພໍ່ແມ່ຂອງຜູ້ເຍົາ.
- ແບ່ງປັນຂໍ້ມູນ PHI ເພື່ອປ້ອງກັນ ຫຼື ຫຼຸດຜ່ອນໄພຂົ່ມຂູ່ທີ່ຮ້າຍແຮງ ແລະທັນທີທັນໃດ ຕໍ່ສຸຂະພາບ ຫຼື ຄວາມປອດໄພຂອງ ບຸກຄົນ ຫຼື ສາທາລະນະ.
- ແບ່ງປັນຂໍ້ມູນ PHI ສະເພາະບາງຢ່າງກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.
- ແບ່ງປັນຂໍ້ມູນ PHI ສຳລັບການຄົ້ນຄວ້າ, ສຳລັບໂຄງການຄົ້ນຄ້ວາທີ່ໄດ້ຮັບການອະນຸມັດ, ເມື່ອຄວາມເປັນສ່ວນຕົວຂອງທ່ານ ໄດ້ຮັບການປົກປ້ອງ.
- ແບ່ງປັນກັບເຈົ້າໜ້າທີ່ທະຫານ, ໃນບາງສະຖານະການ, ຖ້າທ່ານຢູ່ໃນກຳລັງປະກອບອາວຸດ ຫຼື ນັກຮົບເກົ່າ.
- ໃຫ້ຂໍ້ມູນ PHI ແກ່ບັນດາໜ່ວຍງານຊົດເຊີຍຜູ້ອອກແຮງງານ.
- ໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ໃນກໍລະນີສຸກເສີນ ຫຼື ເພື່ອຈຸດປະສົງໃນການບັນເທົາທຸກໄພພິບັດ.
- ຫຼັງຈາກການເສຍຊີວິດຂອງທ່ານ, ແບ່ງປັນຂໍ້ PHI ຂອງທ່ານກັບຜູ້ຕາງໜ້າສ່ວນບຸກຄົນຂອງຊັບສົມບັດຂອງທ່ານ, ເຈົ້າໜ້າທີ່ ຊັນນະສູດຊາກສົບ, ຜູ້ອຳນວຍການຈັດງານສົບ ຫຼື ອົງກອນປຸກຖ່າຍອະໄວຍະວະ.
- ເມື່ອໄດ້ຮັບອະນຸຍາດ ຫຼື ກຳນົດໄວ້ໂດຍກົດໝາຍ

ບັນທຶກການປິ່ນປົວພາວະຜິດປົກກະຕິຈາກການນຳໃຊ້ສານເສບຕິດ

ພວກເຮົາຈະບໍ່ແບ່ງປັນບັນທຶກການປິ່ນປົວ substance use disorder (ພາວະຜິດປົກກະຕິຈາກການນຳໃຊ້ສານເສບຕິດ, SUD) ເວັ້ນເສຍແຕ່ວ່າພວກເຮົາໄດ້ຮັບຄວາມຍິນຍອມຈາກທ່ານ ຫຼື ໄດ້ຮັບການອະນຸຍາດໂດຍກົດລະບຽບຂອງ 42 C.F.R. ພາກທີ 2 (ພາກທີ 2.) ເທົ່ານັ້ນ. ຖ້າພວກເຮົາໄດ້ຮັບບັນທຶກພາກທີ 2 ຂອງທ່ານຈາກບຸກຄົນອື່ນ ເຊັ່ນ: ຜູ້ໃຫ້ບໍລິການ SUD ຂອງທ່ານ, ພວກເຮົາອາດຈະເປີດເຜີຍບັນທຶກດັ່ງກ່າວໄດ້ ຖ້າໄດ້ຮັບການອະນຸຍາດພາຍໃຕ້ HIPAA. ແນວໃດກໍຕາມ, ພວກເຮົາຈະບໍ່ເປີດເຜີຍ ບັນທຶກ SUD ສຳລັບການດຳເນີນຄະດີແພ່ງ, ຄະດີອາຍາ, ຄະດີທາງບໍລິຫານ ແລະ ການຮ້ອງຟ້ອງທາງກົດໝາຍຕໍ່ທ່ານ, ເວັ້ນເສຍແຕ່ວ່າທ່ານໄດ້ຍິນຍອມເປັນລາຍລັກອັກສອນ ຫຼື ເພື່ອປະຕິບັດຕາມຄຳສັ່ງຂອງສານເທົ່ານັ້ນ.

ຈະເປັນແນວໃດ ຖ້າຂ້າພະເຈົ້າຕ້ອງການໃຫ້ບຸກຄົນອື່ນໄດ້ຮັບຂໍ້ມູນ PHI ຂອງຕົນ?

ການແບ່ງປັນບາງປະການທີ່ບໍ່ໄດ້ລະບຸໄວ້ໃນແຈ້ງການສະບັບນີ້ຈຳຕ້ອງໄດ້ຂໍການການອະນຸຍາດຈາກທ່ານ. ພວກເຮົາຈະບໍ່ໃຊ້ຂໍ້ມູນ PHI ຂອງທ່ານເພື່ອການຕະຫຼາດ ຫຼື ຂາຍຂໍ້ມູນ PHI ຂອງທ່ານ ໂດຍບໍ່ໄດ້ຮັບການອະນຸຍາດເປັນລາຍລັກອັກສອນຂອງທ່ານ. ພວກເຮົາຈະຮ້ອງຂໍໃຫ້ທ່ານເຊັນແບບຟອມການອະນຸຍາດ ເພື່ອອະນຸຍາດໃຫ້ພວກເຮົາແບ່ງປັນຂໍ້ມູນ PHI ຂອງທ່ານ ຖ້າ:

- ພວກເຮົາຕ້ອງການການອະນຸຍາດຂອງທ່ານ ເພື່ອໃຫ້ບໍລິການ ຫຼື ການເບິ່ງແຍງດູແລ;
- ພວກເຮົາຕ້ອງການການອະນຸຍາດຂອງທ່ານ ເພື່ອແບ່ງປັນບັນທຶກຈິດບຳບັດ;
- ທ່ານຕ້ອງການໃຫ້ພວກເຮົາສົ່ງຂໍ້ມູນ PHI ຂອງທ່ານໄປຫາໝ່ວຍງານ ຫຼື ຜູ້ໃຫ້ບໍລິການອື່ນ ສຳລັບເຫດຜົນທີ່ບໍ່ໄດ້ຮັບອະນຸຍາດຈາກກົດໝາຍ ໂດຍບໍ່ມີການອະນຸຍາດຈາກທ່ານ ຫຼື
- ທ່ານຕ້ອງການໃຫ້ສົ່ງຂໍ້ມູນ PHI ໄປໃຫ້ຜູ້ອື່ນ ເຊັ່ນ: ທະນາຍຄວາມ, ຍາດພີ່ນ້ອງ ຫຼື ຜູ້ຕາງໜ້າອື່ນໆຂອງທ່ານ.

ການອະນຸຍາດຂອງທ່ານໃຫ້ແບ່ງປັນຂໍ້ມູນ PHI ຂອງທ່ານແມ່ນຈະໃຊ້ໄດ້ ຈົນຖຶງວັນທີສິ້ນສຸດທີ່ທ່ານໄດ້ໃສ່ໄວ້ໃນແບບຟອມ. ພວກເຮົາສາມາດແບ່ງປັນຂໍ້ມູນ PHI ທີ່ທ່ານໄດ້ລະບຸໄວ້ເທົ່ານັ້ນ. ທ່ານສາມາດຍົກເລີກ ຫຼື ປ່ຽນແປງການອະນຸຍາດນີ້ໄດ້ໂດຍການ ຂຽນໜັງສືເປັນລາຍລັກອັກສອນໄປຍັງ DSHS.

ຂ້າພະເຈົ້າສາມາດຂໍເບິ່ງ PHI ຂອງຕົນໄດ້ບໍ?

ທ່ານສາມາດຈະເບິ່ງຂໍ້ມູນ PHI ຂອງທ່ານໄດ້, ໃນຮູບແບບເປັນເຈ້ຍ ຫຼື ເອເລັກໂຕນິກ. ຖ້າທ່ານຮ້ອງຂໍ, ທ່ານຈະໄດ້ຮັບສຳເນົາຂໍ້ມູນ PHI ຂອງທ່ານ. DSHS ອາດຮຽກເກັບຄ່າທຳນຽມທີ່ເໝາະສົມສຳລັບການສຳເນົາ.

ຂ້າພະເຈົ້າສາມາດຂໍບັນຊີລາຍຊື່ການເປີດເຜີຍຂໍ້ມູນ PHI ຂອງຕົນໄດ້ບໍ?

ທ່ານມີສິດໃນການຮ້ອງຂໍບັນຊີ, ເຊິ່ງເປັນບັນຊີລາຍຊື່ຂອງການເປີດເຜີຍຂໍ້ມູນ PHI ຂອງທ່ານໃນຫົກປີທີ່ຜ່ານມາ, ຍົກເວັ້ນການ ເປີດເຜີຍທີ່ເປີດເຜີຍສຳລັບການປິ່ນປົວ, ການຈ່າຍເງິນ, ການດຳເນີນງານ ຫຼື ທີ່ໄດ້ຮັບການອະນຸຍາດຈາກທ່ານແລ້ວ. ຖ້າທ່ານຮ້ອງຂໍບັນຊີການເປີດເຜີຍຫຼາຍກວ່າໜຶ່ງຄັ້ງໃນໄລຍະ 12 ເດືອນ, DSHS ອາດຈະຮຽກເກັບຄ່າທຳນຽມທີ່ສົມເຫດສົມຜົນ.

ຂ້າພະເຈົ້າສາມາດປ່ຽນແປງຂໍ້ມູນ PHI ຂອງຕົນໄດ້ບໍ?

ຖ້າທ່ານຄິດວ່າ ຂໍ້ມູນ PHI ຂອງທ່ານຜິດ, ທ່ານສາມາດຈະຂໍພວກເຮົາເປັນລາຍລັກອັກສອນ ເພື່ອປ່ຽນແປງ ຫຼື ເພີ່ມຂໍ້ມູນ PHI ໃໝ່ໄດ້.

ພວກເຮົາຈະພິຈາລະນາຄຳຮ້ອງຂໍ ແຕ່ບໍ່ຈຳເປັນຕ້ອງຕົກລົງເຫັນດີ. ນອກຈາກນັ້ນ, ທ່ານກໍຍັງສາມາດຈະຮ້ອງຂໍໃຫ້ພວກເຮົາສົ່ງການ ປ່ຽນແປງໃດໜຶ່ງໄປໃຫ້ບຸກຄົນອື່ນທີ່ມີສຳເນົາຂໍ້ມູນ PHI ຂອງທ່ານໄດ້ອີກດ້ວຍ.

ຂ້າພະເຈົ້າສາມາດວາງຂໍ້ຈຳກັດໃນການແບ່ງປັນຂໍ້ມູນ PHI ຂອງຕົນໄດ້ບໍ ແລະ ຂ້າພະເຈົ້າຈະໄດ້ຮັບໄດ້ຄືແນວໃດ?

ທ່ານສາມາດຈະຮ້ອງຂໍພວກເຮົາເປັນລາຍລັກອັກສອນ ເພື່ອຈຳກັດການນຳໃຊ້ ແລະ ການແບ່ງປັນຂໍ້ມູນ PHI ຂອງທ່ານ, ແຕ່ພວກເຮົາບໍ່ຈຳເປັນຕ້ອງຕົກລົງເຫັນດີ. ທ່ານສາມາດຈະຂໍໃຫ້ພວກເຮົາສື່ສານເຖິງຂໍ້ມູນ PHI ຂອງທ່ານກັບທ່ານໃນຮູບແບບອື່ນ ຫຼື ຢູ່ບ່ອນອື່ນໄດ້.

ການລະເມີດແມ່ນຫຍັງ?

ການລະເມີດ ແມ່ນການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນ PHI ຂອງທ່ານທີ່ບໍ່ໄດ້ຮັບການອະນຸຍາດພາຍໃຕ້ HIPAA, ລວມທັງການ
ເຮັດໃສ່ຈາກການລັກ, ຄວາມຜິດພາດ ຫຼື ການແຮັກ. ພວກເຮົາຈະແຈ້ງໃຫ້ທ່ານຊາບທາງໄປສະນີ ຖ້າມີການລະເມີດຂໍ້ມູນ PHI ພາຍໃຕ້ HIPAA.

ຂ້າພະເຈົ້າຈະສາມາດໄດ້ຮັບສຳເນົາຂອງແຈ້ງການກ່ຽວກັບແນວທາງປະຕິບັດສຳລັບຄວາມເປັນສ່ວນຕົວນີ້ບໍ?

ແມ່ນ. ແຈ້ງການກ່ຽວກັບຄວາມເປັນສ່ວນຕົວສະບັບນີ້ ແມ່ນທ່ານເປັນຄົນເກັບຮັກສາໄວ້.
ຖ້າທ່ານໄດ້ຮັບແຈ້ງການສະບັບນີ້ທາງ
ເອເລັກໂຕນິກ, ທ່ານສາມາດຈະຂໍສຳເນົາເອກະສານໄດ້, ແລະ ພວກເຮົາຈະມອບໃຫ້ທ່ານ.

ຈະເຮັດແນວໃດ ຖ້າແນວທາງການປະຕິບັດ ສຳລັບຄວາມເປັນສ່ວນຕົວຂອງ PHI ມີການປ່ຽນແປງ?

ພວກເຮົາຈຳເປັນຕ້ອງປະຕິບັດຕາມແຈ້ງການສະບັບນີ້. ພວກເຮົາມີສິດທີ່ຈະປ່ຽນແປງແຈ້ງການສະບັບນີ້ໄດ້. ຖ້າກົດໝາຍ ຫຼື ແນວທາງປະຕິບັດສຳລັບຄວາມເປັນສ່ວນຕົວຂອງພວກເຮົາມີການປ່ຽນແປງ, ພວກເຮົາຈະປັບປຸງແຈ້ງການສະບັບນີ້ ແລະ ສົ່ງສຳເນົາໃຫ້ທ່ານ ຫຼື ສົ່ງຂໍ້ມູນກ່ຽວກັບແຈ້ງການສະບັບໃໝ່ ແລະ ບ່ອນທີ່ຈະຊອກຫາມັນໄດ້ໃຫ້ແກ່ທ່ານ.

ຂ້າພະເຈົ້າຈະຕິດຕໍ່ໃຜ ຖ້າຂ້າພະເຈົ້າມີຄຳຖາມ ກ່ຽວກັບແຈ້ງການສະບັບນີ້ ຫຼື ສິດຕໍ່ PHI ຂອງຂ້າພະເຈົ້າ?

ຖ້າທ່ານມີຄຳຖາມໃດໆກ່ຽວກັບແຈ້ງການສະບັບນີ້, ທ່ານສາມາດຕິດຕໍ່ເຈົ້າໜ້າທີ່ຄວາມເປັນສ່ວນຕົວຂອງ DSHS ໄດ້ທີ່ DSHSPrivacyOfficer@dshs.wa.gov ຫຼື (360) 902-8278.

ຂ້າພະເຈົ້າຈະລາຍງານການລະເມີດສິດຄວາມເປັນສ່ວນຕົວຂອງຂໍ້ມູນ PHI ຂອງຂ້າພະເຈົ້າ ໄດ້ແນວໃດ?

ຖ້າທ່ານເຊື່ອວ່າມີການລະເມີດສິດຄວາມເປັນສ່ວນຕົວຂອງຂໍ້ມູນ PHI ຂອງທ່ານ, ທ່ານສາມາດຍື່ນຄຳຮ້ອງທຸກກັບ:

ເຈົ້າໜ້າທີ່ຄວາມເປັນສ່ວນຕົວຂອງ DSHS, Department of Social and Health Services, PO Box 45135, Olympia WA 98504-5135 ຫຼື ໂດຍການສົ່ງອີເມວໄປຍັງ DSHSPrivacyOfficer@dshs.wa.gov.
ຖ້າທ່ານຍື່ນຄຳຮ້ອງທຸກ, DSHS ຈະບໍ່ປ່ຽນແປງ ຫຼື ຢຸດຕິການບໍລິການຂອງທ່ານ ແລະ ຈະຕ້ອງບໍ່ແກ້ແຄ້ນທ່ານ.

ຫຼື

ສົ່ງຄຳຮ້ອງທຸກຂອງທ່ານທາງອອນລາຍທີ່: https://ocrportal.hhs.gov/ocr/cp/complaint_frontpage.jsf ຫຼື ໂດຍການຂຽນໜັງສືໄປຫາ: Office for Civil Rights, US Department of Health and Human Services, **200** Independence Avenue, S.W., Room 509F HHH Bldg., Washington, D.C. 20201, ໂທລະສັບ (800) 368-1019. ຄຳຮ້ອງທຸກໃດໜຶ່ງຕ່ໍ DHHS ຈະຕ້ອງໄດ້ຍື່ນພາຍໃນ 180 ວັນ ຫຼັງຈາກມີການລະເມີດຄວາມເປັນສ່ວນຕົວທີ່ກ່າວຫາ.